ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທະນາຄານແຫ່ງ ສປປລາວ (ທຫລ) ຈັດຕັ້ງເຊື່ອມຊຶມກົດລະບຽບພັກ ສະໄໝທີ XI ຢູ່ອົງຄະນະພັກ ທຫລ



ໃນວັນທີ 20 ສິງຫາ 2021 ຜ່ານມາ, ອົງຄະນະພັກທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດຕັ້ງເຊື່ອມຊຶມກົດລະບຽບພັກປະຊາຊົນປະຕິວັດລາວ ສະໄໝທີ XI ຂຶ້ນ ຢູ່ທີ່ສະໂມສອນສະຖາບັນການທະນາຄານ, ນະຄອນຫຼວງວຽງຈັນ ໂດຍພາຍໃຕ້ການເປັນປະທານຂອງ ສະຫາຍ ສອນໄຊ ສິດພະໄຊ ກຳມະການສູນກາງພັກ, ເລຂາຄະນະພັກ-ຜູ້ວ່າການ ທຫລ ແລະ ມີບັນດາສະຫາຍ ຄະນະປະຈຳພັກ-ຄະນະພັກ, ຄະນະໜ່ວຍພັກ, ຄະນະພັກຮາກຖານ ພ້ອມດ້ວຍສະມາຊິກພັກ-ພະນັກງານຫຼັກແຫຼ່ງນຳພາ ທີ່ອົງຄະນະພັກ ທຫລ ເຂົ້າຮ່ວມຫຼາຍກວ່າ 200 ສະຫາຍ.

ຈຸດປະສົງຕົ້ນຕໍຂອງການຈັດຕັ້ງເຊື່ອມຊຶມດັ່ງກ່າວ ກໍເພື່ອແນໃສ່ເຮັດໃຫ້ຖັນແຖວສະມາຊິກພັກ-ພະນັກງານຫຼັກແຫຼ່ງນຳພາຮັບຮູ້, ເຂົ້າໃຈ ແລະ ກຳແໜ້ນ ຕໍ່ກັບເນື້ອໃນກົດລະບຽບພັກ ສະໄໝທີ XI ທີ່ຖືກຮັບຮອງຈາກກອງປະຊຸມໃຫຍ່ຜູ້ແທນທົ່ວປະເທດ ຄັ້ງທີ XI ຂອງພັກ; ພ້ອມນັ້ນ, ໃນພິທີຜູ້ເຂົ້າຮ່ວມຍັງໄດ້ຮັບຟັງການທວນຄືນມູນເຊື້ອຂະບວນວິວັດແຫ່ງການກຳເນີດ ແລະ ຂະຫຍາຍຕົວຂອງລັດຖະທຳມະນູນແຫ່ງ ສປປ ລາວ ຄົບຮອບ 30 ປີ (15 ສິງຫາ 1991 - 15 ສິງຫາ 2021) ແລະ ປະຫວັດມູນເຊື້ອແຫ່ງການສ້າງຕັ້ງ ແລະ ເຕີບໃຫຍ່ຂອງພັກກອມມູນິດຈີນ ຄົບຮອບ 100 ປີ (01 ກໍລະກົດ 1921 - 01 ກໍລະກົດ 2021) ໃນພາລະກິດການຕໍ່ສູ້ກູ້ຊາດ ກໍ່ຄືການສ້າງສາພັດທະນາປະເທດຊາດ ກ້າວຂຶ້ນສູ່ຈຸດໝາຍສັງຄົມນິຍົມ ຕະຫຼອດໄລຍະ 100 ປີ; ນອກນີ້, ຍັງໄດ້ຮັບຟັງເຜີຍແຜ່ໝາກຜົນການຮ່ວມມືລາວ-ຈີນ ຢູ່ຂະແໜງທະນາຄານໃນຊຸມປີຜ່ານມາ.

ໃນຕອນທ້າຍ ສະຫາຍເລຂາຄະນະພັກ ທຫລ ໄດ້ເນັ້ນໜັກ-ຊີ້ນໍາໃຫ້ບັນດາສະຫາຍສະມາຊິກພັກ-ພະນັກ ງານ ຫຼັກແຫຼ່ງນໍາພາ ຕ້ອງສືບຕໍ່ເປັນເຈົ້າການຈັດຕັ້ງການຄົ້ນຄວ້າກໍາແໜ້ນເນື້ອໃນຂອງກົດລະບຽບພັກ ໃຫ້ຖັນແຖວສະມາຊິກພັກຂອງຕົນ ໃຫ້ມີຄວາມຮັບຮູ້ຢ່າງເລິກເຊິ່ງ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດຕົວຈິງມີຄວາມຖືກຕ້ອງ ແລະ ເຂັ້ມງວດ.

# ຂ່າວ:  ກົມຈັດຕັ້ງແລະພະນັກງານ

# ພາບ: ສົມອິກ ເຄນຄໍາແພງ



*ໃຊ້ເງິນກີບທົ່ວທັງຊາດ ສ້າງບົດບາດ ຄ່າເງິນລາວ*